ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 2038 / ອຄ.ທຄວ

ນະຄອນຫຼວງວຽງຈັນ, ວັນທີ 28 ຕຸລາ 2014.

# ແຈ້ງການ

ເຖິງ: - ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ;

- ຫ້ອງການອຸດສາຫະກຳ ແລະການຄ້າເມືອງ, ເທດສະບານ ;

- ສະພາການຄ້າ ແລະ ອຸດສາຫະກຳ, ສະມາຄົມ, ຜູ້ລົງທຶນ (ພາຍໃນ ແລະຕ່າງປະເທດ)

ເລື່ອງ: ຄຳແນະນຳກ່ຽວກັບຊື່ວິສາຫະກິດ ແລະ ເລກລະຫັດວິສາຫະກິດ

- ອີງໃສ່ ໝວດ 2 ແລະ 3 ພາກ II ຂອງກົດໝາຍວ່າດ້ວຍວິສາຫະກິດ, ສະບັບປັບປຸງ - 2013 ;

ເພື່ອ : 1) ໃຫ້ຊື່ ແລະ ເລກລະຫັດວິສາຫະກິດ ທີ່ໄດ້ຮັບການນຳໃຊ້, ຍົກເລີກການນຳໃຊ້ ຫລື ນຳໃຊ້ຄືນໃໝ່ ປະຕິບັດສອດຄ່ອງກັບກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ-2013) ແລະ 2) ສ້າງຄວາມເຂົ້າໃຈທີ່ຖືກຕ້ອງກ່ຽວກັບຄວາມຮັບຜິດຊອບ ຕໍ່ການຄຸ້ມຄອງທະບຽນວິສາຫະກິດ ພາຍຫຼັງຂຶ້ນທະບຽນວິສາຫະກິດນັ້ນ, ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງທຸກພາກສ່ວນທີ່ກ່ຽວຂ້ອງ ຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:

1. ການໃຊ້ຊື່ວິສາຫະກິດ (ນອກຈາກວິສາຫະກິດສ່ວນບຸກຄົນ) ຈະປະຕິບັດໄດ້ ກໍຕໍ່ເມື່ອວິສາຫະກິດທີ່ກ່ຽວຂ້ອງ ໄດ້ຮັບການຈອງຊື່ ຕາມແບບຟອມຄຳຮ້ອງ ແລະ ໄດ້ຮັບການຂຶ້ນທະບຽນວິສາຫະກິດກ່ອນ ເທົ່ານັ້ນ.

2. ສຳລັບວິສາຫະກິດສ່ວນບຸກຄົນ ທີ່ປະສົງຢາກໃຫ້ຊື່ວິສາຫະກິດຂອງຕົນໝັ້ນຄົງ ແລະ ໄດ້ຮັບການປົກປ້ອງ ຕາມກົດໝາຍ ກໍສາມາດດຳເນີນການຈອງຊື່ວິສາຫະກິດນັ້ນໄດ້ ດັ່ງນີ້ :

- ຍື່ນໃບສະເໜີຈອງຊື່ວິສາຫະກິດ ນຳເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງ ໃນພື້ນທີ່ ທີ່ທຸລະກິດນັ້ນຕັ້ງຢູ່. ສຳລັບໃບທະບຽນວິສາຫະກິດ ຂັ້ນໃດອອກກໍໃຫ້ຮັກສາໄວ້ຄືເກົ່າ ບໍ່ຈຳເປັນຕ້ອງປ່ຽນແປງ;
- ໃຊ້ແບບຟອມຄຳຮ້ອງຈອງຊື່ວິສາຫະກິດ ຕາມທີ່ໄດ້ຄັດຕິດມາພ້ອມນີ້.

3. ການເລືອກຊື່ວິສາຫະກິດ ແມ່ນໃຫ້ປະຕິບັດ ຕາມທີ່ບົ່ງໄວ້ໃນມາດຕາ 26 ຂອງກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ-2013). ສ່ວນສາຂາ ຕ້ອງໃຊ້ຊື່ວິສາຫະກິດແມ່ ພ້ອມກັບຄຳວ່າ: ສາຂາ ຕິດນຳທຸກຄັ້ງ;

4. ຄຳວ່າ :

- ຊື່ວິສາຫະກິດທີ່ຊ້ຳຊ້ອນ ແມ່ນຊື່ວິສາຫະກິດ ທີ່ຂຽນເປັນພາສາດຽວກັນ ແຕ່ຄືກັນທັງໝົດທຸກຢ່າງບໍ່ວ່າຈະຂຽນໃນຮູບແບບໃດກໍຕາມ ເຊັ່ນ: ອຸດອນ ແລະ ອຸດອນ ຫລື ອຸ-ດອນ;

- ຊື່ວິສາຫະກິດທີ່ຄຸມເຄືອ ຄ້າຍຄື ແມ່ນຊື່ວິສາຫະກິດ ທີ່ບໍ່ຄືກັນທັງໝົດທຸກຢ່າງຕາມທີ່ກ່າວມາໃນຂີດຫຍໍ້ໜ້າ 1 ເທິງນີ້;

- ຊື່ວິສາຫະກິດ ຊຶ່ງເປັນທີ່ຮູ້ຈັກຢ່າງກວ້າງຂວາງ ຫລື ມີຊື່ສຽງ (ກໍລະນີບໍ່ໄດ້ຈົດທະບຽນ ຕາມກົດໝາຍຊັບສິນທາງປັນຍາ) ແມ່ນໃຫ້ພິຈາລະນາ ຈາກເງື່ອນໄຂ ຕາມທີ່ໄດ້ບົ່ງໄວ້ໃນ ມາດຕາ 17 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ (ເລກທີ 08/ສພຊ, ລົງວັນທີ 24 ທັນວາ 2007) ໂດຍອະນຸໂລມ;

5. ຊື່ວິສາຫະກິດ ທີ່ຂຶ້ນທະບຽນວິສາຫະກິດແລ້ວ ຈະໄດ້ຮັບການປົກປ້ອງໃນຂອບເຂດທົ່ວປະເທດ;

6. ບູລິມະສິດໃນຊື່ວິສາຫະກິດ ໃນກໍລະນີ ມີການໃຊ້ຊື່ຊໍ້າຊ້ອນ ແມ່ນໃຫ້ປະຕິບັດ ດັ່ງນີ້:

- ລະຫວ່າງວິສາຫະກິດທີ່ຈອງຊື່ ແມ່ນໃຫ້ປະຕິບັດຕາມທີ່ໄດ້ບົ່ງໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ;

- ລະຫວ່າງວິສາຫະກິດສ່ວນບຸກຄົນ ທີ່ບໍ່ມີຊື່ສຽງ ແລະ ບໍ່ໄດ້ມີການຈອງຊື່ວິສາຫະກິດຕາມຂໍ້ 2 ເທິງນີ້ ແມ່ນໃຫ້ວິສາຫະກິດສ່ວນບຸກຄົນທີ່ໃຊ້ຊື່ກ່ອນ ມີບູລິມະສິດໃນຊື່ນັ້ນກ່ອນ;

- ລະຫວ່າງວິສາຫະກິດສ່ວນບຸກຄົນ ທີ່ບໍ່ໄດ້ຈອງຊື່ ກັບວິສາຫະກິດ ທີ່ໄດ້ຮັບການຮັບຮອງຊື່ ແມ່ນໃຫ້ວິສາຫະກິດທີ່ຜ່ານການຮັບຮອງຊື່ນີ້ (ບໍ່ວ່າຈະເປັນກ່ອນ ຫລື ຫຼັງການຮັບຮອງ) ມີບູລິມະສິດໃນຊື່ນັ້ນກ່ອນ;

7. ໃນກໍລະນີ ມີບັນຫາໂຕ້ແຍ້ງກັນກ່ຽວກັບປະເດັນຕາມທີ່ກ່າວມາໃນຂີດຫຍໍ້ໜ້າ 2 ແລະ 3 ຂໍ້ 6 ເທິງນີ້ ແມ່ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດຂອງພະແນກອຸດສາຫະກໍາ ແລະ ການຄ້າທີ່ກ່ຽວຂ້ອງ ສັ່ງໃຫ້ວິສາຫະກິດສ່ວນບຸກຄົນທີ່ໃຊ້ຊື່ຊໍ້າຊ້ອນ ຍົກເລີກການນໍາໃຊ້ທັນທີ ແລະ ໃຫ້ໃຊ້ຊື່ໃໝ່ແທນ.

ກໍລະນີບໍ່ປະຕິບັດຕາມ ໃຫ້ພະແນກອຸດສາຫະກໍາ ແລະ ການຄ້າດັ່ງກ່າວ ແຈ້ງໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດຂອງຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງ ທີ່ຂຶ້ນທະບຽນວິສາຫະກິດໃຫ້ ສັ່ງໂຈະການດໍາເນີນທຸລະກິດຊົ່ວຄາວຈົນກວ່າ ໄດ້ມີການປັບປຸງແກ້ໄຂໃຫ້ຖືກຕ້ອງ;

8. ວິສາຫະກິດ ທີ່ເຫັນວ່າ: ວິສາຫະກິດໃດໜຶ່ງ ໃຊ້ຊື່ວິສາຫະກິດ ຄຸມເຄືອ ຫລື ຄ້າຍຄືກັບຊື່ຂອງວິສາຫະກິດຕົນ ຊຶ່ງມີຫຼັກຖານທີ່ເຊື່ອຖືໄດ້ວ່າ : ໄດ້, ກໍາລັງ ຫລື ຈະສ້າງຜົນເສຍຕໍ່ທຸລະກິດ ຫລື ຊື່ສຽງຂອງທຸລະກິດ ສາມາດຍື່ນຄໍາຮ້ອງຕໍ່ສໍານັກງານແກ້ໄຂຂໍ້ຂັດແຍ້ງທາງດ້ານເສດຖະກິດ ຫລື ຮ້ອງຟ້ອງຕໍ່ສານ ເພື່ອໄກ່ເກັ່ຍ, ແກ້ໄຂ ຫລື ພິຈາລະນາຕັດສິນ ໃຫ້ຍົກເລີກການນໍາໃຊ້ຊື່ດັ່ງກ່າວນັ້ນໄດ້.

9. ຊື່ວິສາຫະກິດທີ່ໄດ້ຮັບການຮັບຮອງ ແລະ ຂຶ້ນທະບຽນວິສາຫະກິດ ແຕ່ ພາຍຫຼັງມາພົບວ່າ ເປັນຊື່ທີ່ຊໍ້າຊ້ອນ, ຄ້າຍຄື, ຄຸມເຄືອກັບຊື່ວິສາຫະກິດ ຊຶ່ງເປັນທີ່ຮູ້ຈັກຢ່າງກວ້າງຂວາງ ຫລື ເປັນຊື່ທີ່ລະເມີດບົດບັນຍັດ ຂໍ້ 2, 3 ແລະ 4 ມາດຕາ 27(ປັບປຸງ) ຂອງກົດໝາຍວ່າດ້ວຍວິສາຫະກິດ ແມ່ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງ ສັ່ງໃຫ້ວິສາຫະກິດທີ່ກ່ຽວຂ້ອງຍົກເລີກການນໍາໃຊ້ທັນທີ ແລະ ໃຫ້ຈອງຊື່ໃໝ່ແທນ. ກໍລະນີບໍ່ປະຕິບັດຕາມ ໃຫ້ສັ່ງໂຈະການດໍາເນີນທຸລະກິດຊົ່ວຄາວຈົນກວ່າ ໄດ້ມີການປັບປຸງແກ້ໄຂໃຫ້ຖືກຕ້ອງ;

ສໍາລັບຊື່ວິສາຫະກິດ ຂອງວິສາຫະກິດສ່ວນບຸກຄົນທີ່ບໍ່ໄດ້ຈອງຊື່ ແຕ່ ໄດ້ມີການດໍາເນີນທຸລະກິດມາຕໍ່ເນື່ອງ ຍາວນານ ແລະ ມີເງື່ອນໄຂ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 17 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ

(ເລກທີ 08/ສພຊ, ລົງວັນທີ 24 ທັນວາ 2007), ຖ້າປະສົງຢາກມີບູລິມະສິດ ຫລື ໄດ້ຮັບການປົກປ້ອງ ຕາມກົດໝາຍ ໃຫ້ດຳເນີນການຈອງຊື່ວິສາຫະກິດຂອງຕົນ ຫລື ຈົດທະບຽນຕາມກົດໝາຍຊັບສິນທາງປັນຍາ;

10. ເຈົ້າໜ້າທີ່ທະບຽນວິສາຫະກິດ ທີ່ອະນຸມັດ ຫລື ຮັບຮອງຊື່ວິສາຫະກິດຊ້ຳຊ້ອນເຖິງ 3 ຄັ້ງ ຈະຖືກປະຕິບັດມາດຕະການ ຕາມທີ່ໄດ້ບົ່ງໄວ້ໃນມາດຕາ 214 ຂອງກົດໝາຍວ່າດ້ວຍວິສາຫະກິດ(ສະບັບປັບປຸງ-2013);

11. ເລກລະຫັດວິສາຫະກິດ ຈະໄດ້ມາພ້ອມກັບການຂຶ້ນທະບຽນວິສາຫະກິດ ໂດຍແມ່ນເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງ ເປັນຜູ້ອະນຸມັດໃຫ້ ;

12. ຊື່ວິສາຫະກິດທີ່ຖືກຍົກເລີກ ຢ່າງຖືກຕ້ອງຕາມລະບຽບ ກົດໝາຍ ບໍ່ວ່າຈະດ້ວຍຮູບການໃດກໍຕາມ ເມື່ອຜ່ານໄລຍະຍົກເລີກເຖິງ 3 ປີຕິດຕໍ່ກັນ ນັບແຕ່ວັນຍົກເລີກເປັນທາງການ, ຫາກມີຜູ້ສົນໃຈ ສະເໜີໃນໃບຄຳຮ້ອງຈອງຊື່ ກໍສາມາດອະນຸມັດ ແລະ ຮັບຮອງໃຫ້ນຳໃຊ້ໄດ້ ເວັ້ນເສັຍແຕ່ລະບຽບ ກົດໝາຍກຳນົດເປັນຢ່າງອື່ນ ;

13. ເລກລະຫັດວິສາຫະກິດ ທີ່ຖືກຍົກເລີກໄປ ຫ້າມອະນຸມັດໃຫ້ນຳໃຊ້ໃໝ່ຢ່າງເດັດຂາດ. ໃນກໍລະນີລະເມີດ ຜູ້ທີ່ລະເມີດຈະຖືກປະຕິບັດມາດຕະການຢ່າງເຂັ້ມງວດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 214 ຂອງກົດໝາຍວ່າດ້ວຍວິສາຫະກິດ(ສະບັບປັບປຸງ-2013) ແລະ ໃຫ້ຖືວ່າ: ເລກລະຫັດ ທີ່ອະນຸມັດ ໃຫ້ນັ້ນ ເປັນໂມຄະ;

14. ການແບ່ງງານ ໃນວຽກງານບໍລິການຂຶ້ນທະບຽນວິສາຫະກິດ ຈາກກະຊວງ ໄປເຖິງທ້ອງຖິ່ນ ແມ່ນເພື່ອສ້າງຄວາມສະດວກແກ່ຜູ້ປະກອບການ ຫລື ປະຊາຊົນບັນດາເຜົ່າໃນການປະກອບອາຊີບຂອງຕົນ. ກະຊວງ, ແຂວງ ຫລື ເມືອງໜຶ່ງ ຂຶ້ນທະບຽນວິສາຫະກິດໃຫ້ວິສາຫະກິດໜຶ່ງ ຈະເຮັດໃຫ້ວິສາຫະກິດນັ້ນມີຕົວຕົນ ຖືກຕ້ອງ ມີສິດ ແລະ ພັນທະຕາມລະບຽບ ກົດໝາຍ ແລະ ຈະກາຍເປັນວິສາຫະກິດໜຶ່ງຂອງປະເທດ ບໍ່ແມ່ນຂອງກະຊວງ, ແຂວງ ຫລື ເມືອງທີ່ອອກທະບຽນວິສາຫະກິດໃຫ້.

ວິສາຫະກິດທີ່ໄດ້ຂຶ້ນທະບຽນວິສາຫະກິດສາມາດເຄື່ອນໄຫວທຸລະກິດ ໃນຂອບເຂດທົ່ວປະເທດ ຫລື ກັບຕ່າງປະເທດໄດ້ຕາມລະບຽບກົດໝາຍ ເວັ້ນເສັຍແຕ່ລະບຽບກົດໝາຍກຳນົດເປັນຢ່າງອື່ນ). ວິສາຫະກິດເຄື່ອນໄຫວຢູ່ບ່ອນໃດ ທຸກພາກສ່ວນທີ່ກ່ຽວຂ້ອງ ຢູ່ບ່ອນນັ້ນ ມີໜ້າທີ່ປະສານງານກັນໃນການຄຸ້ມຄອງ ກວດກາ ຕາມພາລະບົດບາດຂອງໃຜມັນ ຕາມທີ່ໄດ້ບົ່ງໄວ້ໃນມາດຕາ 206(ປັບປຸງ) ຂອງກົດໝາຍວ່າດ້ວຍວິສາຫະກິດ;

15. ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ, ສະບັບເລກທີ 0064/ອຄ.ທຄວ, ລົງວັນທີ 10 ມັງກອນ 2013, ເລື່ອງ: ຄຳແນະນຳກ່ຽວກັບຊື່ວິສາຫະກິດ ແລະ ເລກລະຫັດວິສາຫະກິດ ແລະ ບົດແນະນຳ, ສະບັບເລກທີ 0290/ອຄ, ລົງວັນທີ 9 ກຸມພາ 2010, ກ່ຽວກັບການຈັດຕັ້ງປະຕິບັດບາງມາດຕາໃນໝວດ 2 ພາກທີ II ແລະ ພາກທີ VIII ຂອງກົດໝາຍວ່າດ້ວຍວິສາຫະກິດ.

ແຈ້ງມາເພື່ອຊາບ ແລະ ປະຕິບັດຢ່າງເຂັ້ມງວດ.

ທ. ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ;

ສຽວສະຫວາດ ສະແຫວງສຶກສາ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------

## ໃບສະເໜີຈອງຊື່ວິສາຫະກິດ

## ຂອງວິສາຫະກິດສ່ວນບຸກຄົນ

- ອີງຕາມກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ - 2013);

ຂ້າພະເຈົ້າ (ຊື່ ແລະ ນາມສະກຸນ):...................................... ເຈົ້າຂອງວິສາຫະກິດສ່ວນບຸກຄົນ, ຮຽນສະເໜີມາຍັງເຈົ້າໜ້າທີ່ທະບຽນວິສາຫະກິດ ຂອງ...... ................. ພິຈາລະນາຮັບຮອງຊື່ໃດໜຶ່ງ ເພື່ອເປັນຊື່ວິສາຫະກິດສ່ວນບຸກຄົນ ຕາມລຳດັບບູລິມະສິດ ລຸ່ມນີ້:

ຊື່ວິສາຫະກິດ ທີໜຶ່ງ:

- ເປັນພາສາລາວ: "..................... ..........................................", ຂຽນຫຍໍ້ວ່າ: "..............."
- ເປັນພາສາສາກົນ(ຖ້າມີ):"........................................................"; ຂຽນຫຍໍ້ວ່າ: ".............."

ຊື່ວິສາຫະກິດ ທີສອງ:

- ເປັນພາສາລາວ: "..................... ..........................................", ຂຽນຫຍໍ້ວ່າ: "..............."
- ເປັນພາສາສາກົນ (ຖ້າມີ):"....................................................."; ຂຽນຫຍໍ້ວ່າ: "..............."

ຊື່ວິສາຫະກິດ ທີສາມ(ຖ້າມີ):.......................................................;

ວິສາຫະກິດສ່ວນບຸກຄົນຂອງຂ້າພະເຈົ້າ:

- ດຳເນີນທຸລະກິດກ່ຽວກັບ:.........................................................................................;
- ທີ່ຕັ້ງທຸລະກິດ: ບ້ານ..........., ເມືອງ........, ແຂວງ.......,
- ໂທລະສັບ............................ແຟັກ...................................

ຫວັງຢ່າງຍິ່ງວ່າຈະໄດ້ຮັບການພິຈາລະນາຕາມທາງຄວນດ້ວຍ.

ທີ່................ວັນທີ, ເດືອນ, ປີ..................

ຊື່ ແລະ ລາຍເຊັນເຈົ້າຂອງວິສາຫະກິດສ່ວນບຸກຄົນ ( )ຫລື

ຜູ້ໄດ້ຮັບມອບສັນທະ ( )

ໝາຍເຫດ: - ໃບມອບສັນທະ ຫຼື ໃບມອບສິດ ຂອງຜູ້ຍື່ນໃບສະເໜີຈອງຊື່ວິສາຫະກິດ 2 ສະບັບ( )